ທະນາຄານ ພາບລິກ ລາວ ຈຳກັດ
PUBLIC BANK LAO

| ຂໍ້ມູນກ່ຽວກັບການນຳໃຊ້ບັດ | ທະນາຄານ ພາບລິກ ລາວ ຈຳກັດ |
|---|---|
| ກະລຸນາອ່ານຂໍ້ມູນກົດລະບຽບ ແລະ ເງື່ອນໄຂໃນການນຳໃຊ້ບັດໃຫ້ລະອຽດ ກ່ອນທີ່ທ່ານຈະຕັດສິນໃຈ ເປີດນຳໃຊ້ບັດວີຊ່າເຄຣດິດ ຂອງທະນາຄານ ພາບລິກ ລາວ ຈຳກັດ. | ບັດຄຳວີຊ່າ ທະນາຄານພາບລິກ ລາວ |

**1. ບັດຄຳວີຊ່າເຄຣດິດ ແມ່ນຫຍັງ?**

ນີ້ແມ່ນ ບັດຄຳວີຊ່າເຄຣດິດ, ເປັນບັດທີ່ມີການກຳນົດວົງເງິນໃຫ້ ໂດຍທະນາຄານພາບລິກ ລາວ ຈຳກັດ ເພື່ອອອກໃຫ້ກັບສະມາຊິກບັດ ແລະ ເມື່ອສະມາຊິກບັດໄດ້ນຳໃຊ້ເງິນຕາມຈຳນວນທີ່ທາງທະນາຄານໄດ້ກຳນົດໃຫ້ແລ້ວຈະຕ້ອງມາຊຳລະຄືນໃຫ້ກັບທະນາຄານຕາມຈຳນວນທີ່ໄດ້ໃຊ້ຈ່າຍໄປພາຍໃນເວລາທີ່ກຳນົດໄວ້ໃຫ້, ຖ້າບໍ່ດັ່ງນັ້ນ ທາງທະນາຄານຈະຄິດໄລ່ດອກເບ້ຍຕາມຍອດຄ້າງຊຳລະຕົວຈິງ.

**2. ທ່ານຈະໄດ້ຮັບຫຍັງແດ່ຈາກການນຳໃຊ້ບັດວີຊ່າເຄຣດິດ?**

(i) <u>ບັດເສີມ</u>

ທ່ານສາມາດສະໝັກບັດເສີມ ເພື່ອມອບສິດທິພິເສດ ແລະ ຄວາມສະດວກສະບາຍໃນການເປັນສະມາຊິກບັດວີຊ່າຂອງທ່ານໃຫ້ກັບຄົນທີ່ທ່ານຮັກ.

(ii) <u>ວົງເງິນໃນບັດ</u>

ການກຳນົດວົງເງິນໃນບັດແມ່ນຈະໄດ້ຂຶ້ນການກວດສອບ ແລະ ປະເມີນໂດຍທະນາຄານ, ໃນກໍລະນີສະມາຊິກບັດມີການເປີດນຳໃຊ້ບັດຈຳນວນສອງບັດ ຫຼື ຫຼາຍກ່ວາ ກັບທາງທະນາຄານ, ສະມາຊິກບັດຫຼັກ ແລະ ບັດເສີມສາມາດກຳນົດວົງເງິນລວມໃນການໃຊ້ຈ່າຍແຕ່ລະບັດດ້ວຍຕົວເອງ. ຖ້າມີ, ບັດເສີມແມ່ນສາມາດຂໍແຍກວົງເງິນໃຊ້ບັດໄດ້ ໂດຍວົງເງິນເລີ່ມຕົ້ນແມ່ນ 4,000,000 ກີບ. ໃນກໍລະນີສຸກເສີນ ການຂໍເພີ່ມວົງເງິນຊົ່ວຄາວແມ່ນຈະຂຶ້ນຢູ່ກັບປະຫວັດການຈ່າຍຊຳລະຄືນຂອງສະມາຊິກບັດ.

(iii) <u>ການຖອນເງິນສົດ</u>

ລູກຄ້າສາມາດຖອນເງິນສົດຈາກຕູ້ ATM ທີ່ມີສັນຍາລັກ VISA/PLUS ໄດ້ທຸກຕູ້ທັງພາຍໃນ ແລະ ຕ່າງປະເທດ.

- ❖ ຖອນເງິນສົດຜ່ານຕູ້ ATM ຂອງທະນາຄານ ພາບລິກ ລາວ ແມ່ນຈະມີຄ່າທຳນຽມ 2% ຂອງຈຳນວນເງິນທີ່ຖອນ ຫຼື ຕ່ຳສຸດ 40,000 ກີບ ຕໍ່ລາຍການ, ຫຼື ຫຼາຍກ່ວາ.
- ❖ ຖອນເງິນສົດຜ່ານຕູ້ ATM ຂອງທະນາຄານອື່ນ ແມ່ນຈະມີຄ່າທຳນຽມ 5% ຂອງຈຳນວນເງິນທີ່ຖອນ ຫຼື ຕ່ຳສຸດ 100,000 ກີບ ຕໍ່ລາຍການ, ຫຼື ຫຼາຍກ່ວາ.

(iv) <u>ມີການຍອມຮັບໃນທົ່ວໂລກ</u>

ບັດຄຳວີຊ່າເຄຣດິດ ຂອງທະນາຄານພາບລິກ ລາວ ແມ່ນໄດ້ຖືກຍອມຮັບຫຼາຍກ່ວາ 29 ລ້ານຮ້ານຄ້າໃນທົ່ວໂລກ. ມັນສາມາດນຳໃຊ້ໄດ້ກັບທຸກຮ້ານຄ້າທັງພາຍໃນ ແລະ ຕ່າງປະເທດທີ່ສະແດງສັນຍາລັກຂອງ VISA.

(v) <u>ມີຄວາມປອດໄພ ແລະ ບໍ່ຕ້ອງຖືເງິນສົດໃຫ້ຫຍຸ້ງຍາກ</u>

ດ້ວຍຄຸນລັກສະນະພິເສດ ແລະ ເຕັກໂນໂລຊີໃໝ່ຂອງສະມາດຊິບ (smart chip) ທີ່ມີຄວາມປອດໄພສູງໃນບັດຄຳວີຊ່າເຄຣດິດ ຂອງທະນາຄານພາບລິກ ລາວ. ລູກຄ້າສາມາດຊື້ສິນຄ້າໄດ້ກັບທຸກຮ້ານຄ້າທີ່ຍອມຮັບບັດວີຊ່າ, ມັນໃຊ້ໄດ້ດີ ແລະ ສະດວກສະບາຍປຽບເໝືອນມີເງິນສົດຢູ່ໃນມື ຊ່ວຍຫຼຸດຜ່ອນຄວາມສ່ຽງ ແລະ ບໍ່ຕ້ອງພົກພາເງິນສົດໃຫ້ຫຍຸ້ງຍາກ.

(vi) ລາຍການເຄື່ອນໄຫວບັນຊີປະຈຳເດືອນ

ໃບແຈ້ງລາຍການເຄື່ອນໄຫວບັນຊີປະຈຳເດືອນແມ່ນບໍ່ໄດ້ເສຍຄ່າທຳນຽມສຳລັບສະມາຊິກບັດທີ່ຕ້ອງການຕິດຕາມລາຍການໃຊ້ຈ່າຍທີ່ເກີດຈາກການນຳໃຊ້ບັດວີຊ່າເຄຣດິດຄຳຂອງທະນາຄານພາບລິກ ລາວ. ທຸກໆລາຍການໃຊ້ຈ່າຍຜ່ານບັດຂໍ້ມູນແມ່ນຈະບັນທຶກຢູ່ໃນໃບແຈ້ງລາຍການເຄື່ອນໄຫວບັນຊີປະຈຳເດືອນ.

**3. ຄວາມຮັບຜິດຊອບຂອງທ່ານມີຫຍັງແດ່?**

(i) ຍອດຊຳລະຂັ້ນຕ່ຳໃນແຕ່ລະເດືອນ

10% ຂອງຍອດຄ້າງຊຳລະທັງໝົດໃນເດືອນ ຫຼື ຕ່ຳສຸດ 400,000 ກີບ

(ii) ໄລຍະປອດດອກເບ້ຍ ສະເພາະລາຍການຊື້ສິນຄ້າ ແລະ ບໍລິການ

ໄລຍະປອດດອກເບ້ຍແມ່ນ 14ວັນ ສະເພາະລາຍການຊື້ສິນຄ້າ ແລະ ບໍລິການຕ່າງໆ, ທາງທະນາຄານຈະແຈ້ງຍອດຊຳລະຂອງເດືອນທີ່ຜ່ານມາ ຕາມໃບແຈ້ງລາຍການເຄື່ອນໄຫວບັນຊີປະຈຳເດືອນ ເພື່ອໃຫ້ລູກຄ້າເຂົ້າມາຊຳລະເຕັມຈຳນວນຕາມຍອດທີ່ໄດ້ໃຊ້ໄປພາຍໃນເວລາທີ່ກຳນົດ. ໃນກໍລະນີລູກຄ້າບໍ່ມາຊຳລະໃຫ້ທັນເວລາໃນຊ່ວງໄລຍະປອດດອກເບ້ຍ ທະນາຄານຈະຄິດໄລ່ດອກເບ້ຍໃນອັດຕາ 1.50% ຕໍ່ເດືອນ ຂອງມູນຄ່າລວມລາຍການຊື້ສິນຄ້າ ແລະ ບໍລິການ ເຊິ່ງຈະເລີ່ມຄິດໄລ່ຈາກມື້ທີ່ໄດ້ອອກໃບແຈ້ງລາຍການເຄື່ອນໄຫວບັນຊີປະຈຳເດືອນ.

ໝາຍເຫດ: ລາຍການຊື້ສິນຄ້າ ແລະ ບໍລິການແມ່ນບໍ່ໄດ້ລວມເອົາລາຍການຖອນເງິນສົດ.

(iii) ອັດຕາດອກເບ້ຍ

| | | | |
|---|---|---|---|
| ອັດຕາ ດອກເບ້ຍ | ຊື້ສິນຄ້າ ແລະ ບໍລິການ | 18% ຕໍ່ປີ | ອັດຕາດອກເບ້ຍການຊື້ສິນຄ້າ ແລະ ບໍລິການ |
| | ຖອນເງິນສົດ | 20% ຕໍ່ປີ | ອັດຕາດອກເບ້ຍການຖອນເງິນສົດ |

(iv) ເຈົ້າຂອງບັດຫຼັກຈະຕ້ອງຮັບຜິດຊອບຕໍ່ທຸກໆລາຍການທີ່ເກີດຂຶ້ນໂດຍຜູ້ຖືບັດເສີມ.

**4. ທ່ານຈະຕ້ອງຈ່າຍຄ່າທຳນຽມຫຍັງແດ່?**

(i) ຄ່າສະໝັກບັດ ແລະ ຄ່າທຳນຽມລາຍປີ

| ປະເພດບັດ | ບັດຫຼັກ | ບັດເສີມ |
|---|---|---|
| ຄ່າສະໝັກ (ເກັບເທື່ອດຽວ) | 200,000 ກີບ | 100,000 ກີບ |
| ຄ່າທຳນຽມລາຍປີ | 400,000 ກີບ | 200,000 ກີບ |

(ii) ຄ່າທຳນຽມຖອນເງິນສົດ

| | |
|---|---|
| ຄ່າທຳນຽມຖອນເງິນສົດ (ຕໍ່ຄັ້ງ) | |
| ❖ ຕູ້ ATM ຂອງທະນາຄານພາບລິກ ລາວ. | 2% ຂອງຈຳນວນເງິນທີ່ຖອນ, ຕ່ຳສຸດ 40,000 ກີບ ຫຼື ຫຼາຍກ່ວາ. |
| ❖ ທະນາຄານ ຫຼື ສະຖາບັນການເງິນອື່ນໆໃນທົ່ວໂລກ. | 5% ຂອງຈຳນວນເງິນທີ່ຖອນ, ຕ່ຳສຸດ 100,000 ກີບ ຫຼື ຫຼາຍກ່ວາ. |
| ອັດຕາດອກເບ້ຍໃນການຖອນເງິນສົດ | 20% ຕໍ່ປີ |

ຄ່າທຳນຽມການຖອນເງິນສົດໃນແຕ່ລະຄັ້ງ ແມ່ນຂຶ້ນກັບຈຳນວນເງິນທີ່ຖອນ ຫຼື ຕ່ຳສຸດ 40,000 ກີບ ສຳລັບການຖອນຈາກຕູ້ເອທີເອັມ ທະນາຄານພາບລິກ ລາວ ຫຼື 100,000 ກີບ ສຳລັບການຖອນຈາກຕູ້ເອທີເອັມ ຂອງທະນາຄານອື່ນ. ນອກຈາກນີ້, ອັດຕາດອກເບ້ຍໃນການຖອນເງິນສົດແມ່ນຈະຄິດໄລ່ເລີ່ມຈາກມື້ທີ່ລູກຄ້າຖອນເງິນໄປຈົນເຖິງມື້ທີ່ລູກຄ້າມາຊຳລະຄືນເຕັມຈຳນວນ.

(iii) ຄ່າທຳນຽມການໃຊ້ເກີນວົງເງິນ

ບໍ່ມີ

(iv) ຄ່າທຳນຽມການແລກປ່ຽນຂອງທຸລະກຳທີ່ເກີດຂຶ້ນຢູ່ຕ່າງປະເທດ

ທຸລະກຳທີ່ເກີດຂຶ້ນເປັນເງິນຕາຕ່າງປະເທດ ແມ່ນຈະຖືກແລກປ່ຽນມາເປັນເງິນກີບຂອງລາວ ໂດຍນຳໃຊ້ເງິນໂດລາເປັນສະກຸນກາງໃນການແລກປ່ຽນພາຍໃນມື້ທີ່ໄດ້ຮັບການຮຽກເກັບ ແລະ/ຫຼື ມື້ທີ່ໄດ້ເຮັດທຸລະກຳ ສ່ວນອັດຕາແລກປ່ຽນ ແມ່ນກຳນົດໂດຍສູນ VISA ສາກົນ. ນອກຈາກນັ້ນທ່ານຍັງຈະໄດ້ຈ່າຍຄ່າທຳນຽມຄວາມຜິດດ່ຽງ 1.25% ຂອງຈຳນວນເງິນທີ່ປ່ຽນມາເປັນເງິນກີບແລ້ວ ສຳລັບລາຍການທີ່ເກີດຂຶ້ນເປັນເງິນຕາຕ່າງປະເທດ, ການແລກປ່ຽນອາດຈະຜິດດ່ຽງຈາກອັດຕາຂອງມື້ທີ່ເຮັດທຸລະກຳເນື່ອງຈາກຄວາມຜັນຜວນຂອງຕະຫຼາດ. ອັດຕາແລກປ່ຽນທີ່ກຳນົດຈະແມ່ນອັດຕາສຸດທ້າຍ ແລະ ສະມາຊິກບັດຈະຕ້ອງຍອມຮັບຕໍ່ທຸກຄວາມສ່ຽງທີ່ເກີດຈາກການແລກປ່ຽນ, ການສູນເສຍ, ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍອື່ນໆທີ່ອາດຈະເກີດຂຶ້ນ.

(v) ຄ່າທຳນຽມການຂໍໃບບັນທຶກການຂາຍ

120,000 ກີບຕໍ່ລາຍການ.

(vi) ການຂໍໃບແຈ້ງລາຍການເຄື່ອນໄຫວບັນຊີເພີ່ມ

50,000 ກີບ/ຄັ້ງ

(vii) ຄ່າທຳນຽມການປ່ຽນບັດໃໝ່

200,000 ກີບ

**5. ຈະເກີດຫຍັງຂຶ້ນຖ້າທ່ານບໍ່ສາມາດປະຕິບັດຕາມສັນຍາຜູກມັດ?**

(i) ຄ່າທຳນຽມການຈ່າຍຊຳລະຊ້າ

ຖ້າຫາກທ່ານບໍ່ສາມາດຈ່າຍຊຳລະຂັ້ນຕ່ຳພາຍໃນເວລາທີ່ກຳນົດໄວ້, ທ່ານຈະຕ້ອງໄດ້ເສຍຄ່າທຳນຽມຈ່າຍຊຳລະຊ້າຕ່ຳສຸດແມ່ນ 100,000 ກີບ ຫຼື 5% ຂອງຍອດຊຳລະຂັ້ນຕ່ຳ ຕາມໃບແຈ້ງລາຍການເຄື່ອນໄຫວບັນຊີປະຈຳເດືອນ ຫຼື ຫຼາຍກ່ວານັ້ນ ເຊິ່ງຈະຫັກໃນບັນຊີບັດ.

(ii) ສິດໃນການຫັກບັນຊີ

ທະນາຄານພາບລິກ ລາວ ຈຳກັດ ມີສິດເຕັມທີ່ໃນການຫັກບັນຊີທຸກບັນຊີ ຂອງທີ່ທ່ານມີຢູ່ກັບທະນາຄານ ແລະ/ຫຼື ບັນດາສາຂາຂອງທະນາຄານເພື່ອຈ່າຍຍອດຄ້າງຊຳລະໜີ້ໃນບັນຊີບັດເຄຣດິດ.

(iii) ຄວາມຮັບຜິດຊອບຕໍ່ກັບທຸລະກຳທີ່ບໍ່ໄດ້ຮັບອະນຸຍາດ

ໃນກໍລະນີບັດເກີດສູນຫາຍ/ຖືກລັກ, ຄວາມຮັບຜິດຊອບທີ່ເກີດຈາກທຸລະກຳທີ່ບໍ່ໄດ້ຮັບອະນຸຍາດຂອງທ່ານສູງສຸດແມ່ນບໍ່ເກີນ 560,000 ກີບ, ຖ້າຫາກທ່ານບໍ່ໄດ້ກະທຳການສໍ້ໂກງ ຫຼື ບໍ່ໄດ້ຜິດພາດໃນການແຈ້ງໃຫ້ທະນາຄານຮັບຊາບຢ່າງຮີບດ່ວນ ແລະ ມີເຫດຜົນພຽງພໍ ຫຼັງຈາກທີ່ຮູ້ວ່າບັດເຄຣດິດຂອງທ່ານສູນຫາຍ ຫຼື ຖືກລັກ. ຖ້າການກວດສອບເຫັນວ່າທ່ານມີສ່ວນກ່ຽວຂ້ອງ ຕໍ່ທຸລະກຳທີ່ບໍ່ໄດ້ຮັບອະນຸຍາດທີ່ເກີດຂຶ້ນນີ້, ທ່ານຈະຕ້ອງຮັບຜິດຊອບຕໍ່ໜີ້ສິນທັງໝົດທີ່ເກີດຂຶ້ນ, ລວມເຖິງຄ່າທຳນຽມທາງການເງິນອື່ນໆ ທັງກ່ອນ ຫຼື ຫຼັງຈາກທີ່ທະນາຄານຈະໄດ້ຮັບການຢັ້ງຢືນ. ມັນເປັນການເຫັນດີຢ່າງຈະແຈ້ງວ່າ ທະນາຄານຈະບໍ່ມີຄວາມຮັບຜິດຊອບໃດໆ ຕໍ່ການກຳນົດວົງເງິນດັ່ງກ່າວ.

ໝາຍເຫດ: ຖ້າທ່ານບໍ່ສາມາດປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂຂອງບັດເຄຣດິດ, ທະນາຄານມີສິດໃນການຍົກເລີກບັດຂອງທ່ານ.

ທະນາຄານ ພາບລິກ ລາວ ຈຳກັດ
PUBLIC BANK LAO

| 6. ຄວາມສ່ຽງທີ່ອາດຈະເກີດຂຶ້ນມີຫຍັງແດ່? |
|---|
| ບັດຂອງທ່ານໄດ້ຖືກລັກ ຫຼື ສູນຫາຍ.<br><br>ທ່ານຄວນແຈ້ງໃຫ້ທະນາຄານພາບລິກ ລາວ ຈຳກັດ ຮັບຊາບໃນທັນທີ ຫຼັງຈາກທີ່ຮູ້ວ່າບັດເຄຣດິດຂອງທ່ານຖືກລັກ ຫຼື ສູນຫາຍ. ກໍລະນີເກີດເຫດການດັ່ງກ່າວໃຫ້ໂທແຈ້ງ: +(856)21 262188. ທ່ານຄວນລາຍງານຕໍ່ກັບທະນາຄານໃນທັນທີເຊັ່ນດຽວກັນເມື່ອບຸກຄົນອື່ນຮູ້ລະຫັດບັດຂອງທ່ານ.<br><br>ກໍລະນີທ່ານຈ່າຍຊຳລະຂັ້ນຕໍ່າສຸດໃນແຕ່ລະເດືອນເທົ່ານັ້ນ, ດອກເບ້ຍແມ່ນຈະຄິດໄລ່ໃນອັດຕາ 18% ຕໍ່ປີ ຂອງມູນຄ່າຄ້າງຊຳລະໄປເລື້ອຍໆຈົນກ່ວາຈະຊຳລະຄືນເຕັມຈຳນວນທັງໝົດ. ທ່ານຄວນຊຳລະໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ ເພື່ອຫຼີກເວັ້ນການເພີ່ມຂຶ້ນຂອງດອກເບ້ຍ. ຖ້າທ່ານໃຊ້ບັດເຄຣດິດຊຳລະໜີ້ທາງການເງິນອື່ນໆຈຳນວນດອກເບ້ຍອາດຈະເພີ່ມສູງຂຶ້ນ. |
| **7. ທ່ານຈະຕ້ອງເຮັດແນວໃດຖ້າຕ້ອງການປ່ຽນແປງຂໍ້ມູນການຕິດຕໍ່?** |
| ມັນມີຄວາມສຳຄັນຫຼາຍໃນການແຈ້ງເປັນລາຍລັກອັກສອນຕໍ່ ທະນາຄານພາບລິກ ລາວ ຈຳກັດ ກ່ຽວກັບການປ່ຽນແປງຂໍ້ມູນການຕິດຕໍ່ຂອງທ່ານ ເພື່ອໃຫ້ແນ່ໃຈວ່າທຸກໆຂໍ້ມູນທີ່ສົ່ງໄປໃຫ້ນັ້ນຈະເຖິງມືຂອງທ່ານຢ່າງທັນເວລາ.<br><br>ທ່ານສາມາດຕິດຕໍ່ຫາທະນາຄານພາບລິກ ລາວ ໄດ້ທີ່:<br>**100/1-4, ຖະໜົນ ຊຸນບຸລົມ, ຕູ້ໄປສະນີ 6614**<br>**ບ້ານ ຫັດສະດີໃຕ້, ເມືອງ ຈັນທະບູລີ,**<br>**ນະຄອນຫຼວງວຽງຈັນ, ສປປລາວ**<br>**ໂທ: (856-21) 262188**<br>**ແຟັກ: (856-21) 261 077**<br>**ອີ-ເມວ: laosccd@publicbank.com.la** |
| **ໝາຍເຫດສຳຄັນ: ທາງທະນາຄານຈະດຳເນີນການຕາມກົດໝາຍ ຖ້າທ່ານບໍ່ຈ່າຍຊຳລະໜີ້ບັດເຄຣດິດຂອງທ່ານ** |

ຂໍ້ມູນການນຳໃຊ້ບັດນີ້ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2024 ປັນຕົ້ນໄປ.